ສິ່ງເສີມການປູກໝາກກ້ວຍທະນີ (ໝາກກ້ວຍນ້ຳ)

ໃນແຂວງ ຊຽງຂວາງ

ກ້ວຍທະນີ (ກ້ວຍນ້ຳ) ແມ່ນໝາກໄມ້ຊະນິດໜຶ່ງທີ່ມີການປູກຫລາຍຢູ່ໃນທ້ອງຖິ່ນປະເທດລາວ ແຕ່ເໜືອ ເຖິງ ໃຕ້ ແລະ ນິຍົມບໍລິໂພກກັນຫລາຍ, ເນື່ອງຈາກວ່າກ້ວຍທະນີເປັນໝາກກ້ວຍທີ່ບໍລິໂພກງ່າຍ ແລະ ມີວິຕາມິນສູງຕໍ່ຮ່າງກາຍຊ່ວຍລະບາຍງ່າຍບໍ່ວ່າເດັກນ້ອຍ ຫລື ຄົນສູງອາຍຸກໍ່ສາມາດບໍລິໂພກໄດ້ເພື່ອເປັນຂອງຫວານຫລັງຮັບປະທານອາຫານ.

ການຄຸ້ມຄອງບົວລະບັດຮັກສາ:

- ວິທີການປູກ ມີ 2 ວິທີຄື:ປູກດ້ວຍຫນໍ່ ແລະປູກດ້ວຍເຫງົ້າ.
- ຄວນເລືອກສະຖານທີ່ຮາບພຽງດີພໍສົມຄວນ ແລະ ມີການ ລະບາຍນ້ຳໄດ້ດີ(ນ້ຳບໍ່ຂັງ) ຖ້າເປັນດິນ ຄ່ອຍຊັນກໍ່ບໍ່ໃຫ້ເກີນ 45 ອົງສາ ເປັນດິນ ຟຸຟຸ ອຸດົມສົມບູນດີ.
- ໄລຍະຫ່າງການປູກແມ່ນ5ແມັດx 5 ແມັດ,ໃນເນື້ອທີ່ 1 ຮຕ,ສາມາດປູກໄດ້ 400 ຕົ້ນ
- ຄວນປູກກ່ອນບຸນປີໃໝ່ລາວ (ເດືອນເມສາ) ຫຼື ກ່ອນລະດູຝົນ,ຖ້າຝົນຕົກຫຼາຍຈະພາໃຫ້ໜໍ່ກ້ວຍເນົ່າ.

ຜົນຜະລິດ:

ການສົ່ງເສີມການປູກໝາກກ້ວຍໄດ້ຈັດຕັ້ງປະຕິບັດ ຢູ່ 64 ຄອບຄົວ 8 ບ້ານ ເມືອງເມືອງພູກູດ ໃນເນື້ອທີ່ 20 ເຮັກຕາ, 5,073 ສູມ, 30,438 ຕົ້ນ, ຜົນຜະລິດ 15,219 ເຄືອ ລາຍຮັບ 149,253,000 ກີບ.

ການຕະຫລາດ:

- ສາມາດສົ່ງອອກຈຳໜ່າຍຢູ່ຕະຫລາດ ໂພນສະຫວັນ ແລະ ທີ່ວຽງຈັນ
- ລາຄາຊື້-ຂາຍຢູ່ບ້ານ 10,000-12,000 ກີບ/ເຄືອ , ສ່ວນລາຄາຂາຍ ຢູ່ຕະຫລາດ ໂພນສະຫວັນ ແມ່ນ 15,000-20,000 ກີບ / ເຄືອ.

ໂອກາດ:

- ສາມາດ ຂະຫຍາຍເນື້ອທີ່ການຜະລິດອອກໄປສູ່ບ້ານອື່ນໃຫ້ກວ້າງອອກ ເນື່ອງຈາກວ່າ ສະພາບດິນຟ້າອາກາດ ແລະ ດິນເຂດນີ້ມີຄວາມອຸດົມສົມບູນ ແລະເໝາະສົມກັບການປູກ ໝາກກ້ວຍພື້ນເມືອງ.

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

NAFRI

The Agro-Biodiversity Initiative (TABI)